**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

# Lecture 6
## Policy of state to the task of enforcement and judgement
## ນະໂຍບາຍຂອງລັດຕໍ່ວຽກງານປະຕິບັດຂອງສານ

### 1. ຈຸດປະສົງນະໂຍບາຍຂອງລັດຕໍ່ວຽກງານປະຕິບັດຄໍາຕັດສິນຂອງສານ

ທິດທາງລວມແຕ່ນີ້ຮອດປີ 2025 ການຄຸ້ມຄອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃຫ້ຄຽງຄູ່ກັບການຄຸ້ມຄອງເສດຖະກິດ-ສັງຄົມດ້ວຍລັດຖະທໍາມະນູນ ແລະ ກົດໝາຍ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບຄົບຖ້ວນ ແລະ ຖືກຕ້ອງ, ຮັບປະກັນຄວາມສັກສິດຂອງກົດໝາຍ ໂດຍອົງການຈັດຕັ້ງປະຕິບັດກົດໝາຍຕ້ອງໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນລະບົບມີບຸກຄະລາກອນຄອບຄຸມບັນຊາຢ່າງພຽງພໍ. ມີພາລະໜ້າທີ່ອັນຈະແຈ້ງເພື່ອພ້ອມກັນປະຕິບັດພາລະບົດບາດຕົ້ນຕໍຂອງລັດ ທີ່ຄຸ້ມຄອງດ້ວຍກົດໝາຍ ໂດຍການຊຸກຍູ້ປຸກລະດົມ ແລະ ສ້າງເງື່ອນໄຂເພື່ອເຮັດໃຫ້ທົ່ວສັງຄົມເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ທົ່ວເຖິງພ້ອມດຽວກັນນັ້ນກໍາກຽມພ້ອມຕ້ານ ແລະ ສະກັດກັ້ນທຸກປະກົດການຫຍໍ້ທໍ້ທີ່ເປັນຜົນກະທົບຕໍ່ຄວາມສັກສິດຂອງກົດໝາຍ.[1]

ຈຸດປະສົງນະໂຍບາຍຂອງລັດຕໍ່ກັບວຽກງານປະຕິບັດຄໍາຕັດສິນຂອງສານ ກໍແມ່ນເພື່ອສ້າງສະຕິເຄົາລົບກົດໝາຍ, ສ້າງຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກຂອງລັດ ເພື່ອສ້າງຄວາມເປັນເອກະພາບໃຫ້ເປັນອັນໜຶ່ງອັນດຽວກັນທາງດ້ານທັດສະນະ, ຫຼັກການ ແລະ ການປະຕິບັດຕົວຈິງລະຫວ່າງອົງການຄຸ້ມຄອງ, ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານກັບພາກສ່ວນທີ່ກ່ຽວຂ້ອງ ກໍຄືຄະນະປະສານງານໃນການປົກປ້ອງກົດໝາຍຂັ້ນຕ່າງໆ.

ຈຸດປະສົງຕົ້ນຕໍນະໂຍບາຍຂອງລັດຕໍ່ວຽກງານປະຕິບັດຄໍາຕັດສິນຂອງສານມີດັ່ງນີ້:

+ ເພື່ອສ້າງຄວາມເປັນເອກະພາບຕໍ່ວຽກງານການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ, ຍົກສູງບົດບາດຂອງອົງການປະຕິບັດຄໍາຕັດສິນຂອງສານເພື່ອຮັບປະກັນໃຫ້ຄໍາຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

+ ແນໃສ່ປັບປຸງການຈັດຕັ້ງຂອງອົງການປະຕິບັດຄໍາຕັດສິນຂອງສານໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ສາມາດເຮັດສໍາເລັດໜ້າທີ່ຂອງຕົນຕາມທີ່ກົດໝາຍກໍານົດໄວ້.

+ ແນໃສ່ແກ້ໄຂບັນຫາທີ່ຄົງຄ້າງ, ຫາງສຽງຈົ່ມວ່າຂອງສັງຄົມຕໍ່ການປະຕິບັດຄໍາຕັດສິນຂອງສານ, ສ້າງຄວາມເຊື່ອໝັ້ນ ແລະຄວາມເພິ່ງພໍໃຈຂອງສັງຄົມຕໍ່ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ.

---

[1] ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 38/ນຍ, ລົງວັນທີ 6 ພະຈິກ 2006

+ ແນໃສ່ປັບປຸງພາລະບົດບາດ ໃນການຄຸ້ມຄອງມະຫາພາກ ໃນການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ສໍາລັບຢູ່ກະຊວງຍຸຕິທໍາ, ພັດທະນາອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຢູ່ຂັ້ນທ້ອງຖິ່ນໃຫ້ກາຍເປັນອົງການຈັດຕັ້ງປະຕິບັດຕົວຈິງທີ່ແຂງແຮງເທື່ອລະກ້າວ.

+ ປັບປຸງກົງຈັກການຈັດຕັ້ງພາຍໃນໃຫ້ຄົບຖ້ວນ, ປະກອບບຸກຄະລາກອນໃຫ້ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃຫ້ເໝາະສົມກັບຈໍານວນຄະດີ, ຄົ້ນຄ້ວາການເກັບຄ່າບໍລິການທີ່ເໝາະສົມ ເພື່ອຮັບປະກັນເຮັດໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ມີງົບປະມານພຽງພໍໃນການເຄື່ອນໄຫວ.

+ ປັບປຸງການເຄື່ອນໄຫວວຽກງານ ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຢູ່ແຕ່ລະຂັ້ນ, ຕິດພັນກັບການປັບປຸງກົດໝາຍ, ວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃຫ້ສໍາເລັດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນໃຫ້ມີຄວາມສັກສິດຫຼາຍຂຶ້ນ.

+ ແນໃສ່ການຄຸ້ມຄອງ, ຈໍລະຈອນຄໍາຕັດສິນຂອງສານ ແລະ ຄົ້ນຄ້ວາສ້າງລະບຽບການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມແຕ່ລະກໍລະນີ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານມີຄວາມສະດວກ, ຖືກຕ້ອງ ແລະ ທັນການ.

## 2. ນະໂຍບາຍພື້ນຕໍຂອງລັດຕໍ່ວຽກງານປະຕິບັດຄໍາຕັດສິນຂອງສານ

ລັດສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ການປະຕິບັດຄໍາຕັດສິນຂອງສານ ດ້ວຍການວາງນະໂຍບາຍ, ກໍານົດລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມວ່ອງໄວ, ຖືກຕ້ອງ ແລະ ເປັນທໍາ.

ລັດສົ່ງເສີມການໂຄສະນາ, ສຶກສາອົບຮົມ ໃຫ້ພົນລະເມືອງບັນດາເຜົ່າ, ການຈັດຕັ້ງຂອງລັດ, ຂອງສັງຄົມ, ວິສາຫະກິດ ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການປະຕິບັດຄໍາຕັດສິນຂອງສານ.

ລັດຍັງໄດ້ມີນະໂຍບາຍ ແລະ ໄດ້ມີການໃຫ້ສິດຕໍ່ກະຊວງຍຸຕິທໍາໃນການປັບປຸງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ເພື່ອຍົກໃຫ້ເຫັນບົດບາດ, ຄວາມສໍາຄັນຂອງກະຊວງຍຸຕິທໍາຕໍ່ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ແລະ ທັງເປັນການກວດກາຄືນກ່ຽວກັບສະພາບຈຸດພິເສດ,ດ້ານດີທີ່ຕັ້ງໜ້າ ແລະ ດ້ານອ່ອນທີ່ຍັງຄົງຄ້າງໃນໄລຍະຜ່ານມາທີ່ຕ້ອງໄດ້ປັບປຸງໃຫ້ດີຂຶ້ນ.

ລັດຖະບານ ກໍຄືກະຊວງຍຸຕິທໍາ ຍາມໃດກໍມີທິດທາງ ແລະ ນະໂຍບາຍຕໍ່ກັບວຽກງານປະຕິບັດຄໍາຕັດສິນຂອງສານ ຊຶ່ງສະແດງອອກດັ່ງນີ້[2]:

+ ລັດໄດ້ປັບປຸງກົງຈັກຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ, ເຮັດໃຫ້ພະ

[2] ບົດລາຍງານຂອງລັດຖະມົນຕີກະຊວງຍຸຕິທໍາກ່ຽວກັບວຽກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານຕໍ່ກອງປະຊຸມສະໄໝສາມມັນເທື່ອທີ 4 ຂອງສະພາແຫ່ງຊາດ, ຊຸດທີ VIII (ຄັ້ງວັນທີ 25/10/2017), ໜ້າ 4;

ນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີທັດສະນະທີ່ຖືກຕ້ອງ ແລະ ໂປ່ງໃສ, ເອົາໃຈໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ່ແກ່ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ເພີ່ມທະວີກົນໄກການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີຄວາມແໜ້ນແຟ້ນ ແລະ ກົມກຽວກັນ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມວ່ອງໄວ, ຖືກຕ້ອງ, ເຂັ້ມງວດ ແລະ ສັກສິດ, ສູ້ຊົນສ້າງບາດກ້າວບຸກທະລຸໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ບັນລຸຄາດໝາຍສູ້ຊົນທີ່ວາງໄວ.

+ ຕັ້ງໜ້າສຶກສາອົບຮົມ , ໂຄສະນາເຜີຍແຜ່ມາດຕາ 98 ຂອງລັດຖະທາມະນູນ ແລະ ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄາຕັດສິນຂອງສານ ໃຫ້ເລິກເຊິ່ງ, ທົ່ວທຸກເປົ້າໝາຍ ເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈ, ຈິດສຳນຶກເຄົາລົບຕໍ່ຄຳຕັດສິນຂອງສານ ໃຫ້ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ຄຳຕັດສິນຂອງສານ.

+ ລັດໄດ້ຄົ້ນຄວ້າ ແລະ ປັບປຸງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ສ້າງນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງໃຫແກ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

+ ຫັນພະນັກງານ ລົງສົມທົບຊ່ວຍແຂວງທີ່ມີຄວາມຫຍຸ້ງຍາກທາງດ້ານບຸກຄະລາກອນ ເພື່ອຊຸກຍູ້ ແລະ ຊີ້ນຳຕົວຈິງໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

+ ຄົ້ນຄວ້າ, ສະຫຼຸບສັງລວມສະຖິຕິຄຳຕັດສິນຄະດີປະເພດຕ່າງໆທີ່ພວມປະຕິບັດ ແລະ ຄຳຕັດສິນທີ່ບໍ່ມີເງື່ອນໄຂປະຕິບັດໄດ້ນັ້ນ ໃຫ້ຊັດເຈນທາງດ້ານຈຳນວນ, ບັນດາສາເຫດ ເພື່ອກຳນົດວິທີການ ແລະ ມາດຕະການແກ້ໄຂໃຫ້ຖືກຕ້ອງ ແລະ ສອດຄອງ.

+ ລັດເອົາໃຈໃສ່ເພີ່ມທະວີການພົວພັນແລກປ່ຽນບົດຮຽນກັບຕ່າງປະເທດ ເພື່ອຄົ້ນຄວ້າຊອກຮູ້ບົດຮຽນທີ່ດີຂອງບັນດາປະເທດຕ່າງໆມາໝູນໃຊ້ເຂົ້າໃນການປັບປຸງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມສອດຄອງ, ໜັກແໜ້ນ, ເຂັ້ມແຂງຕື່ມ.

ນອກຈາກນີ້ ລັດຍັງໄດ້ກຳນົດນະໂຍບາຍຕໍ່ຜູ້ທີ່ມີຜົນງານຄື: ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ລວມທັງບຸກຄົນ ແລະ ອົງການຈັດຕັ້ງອື່ນທີ່ໄດ້ໃຫ້ການຮ່ວມມື, ປະກອບສ່ວນເຂົ້າໃນວຽກງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ[3].

## 3. ນະໂຍບາຍຈຸດສຸມໃນຕໍ່ໜ້າຂອງລັດຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ

**1). ດ້ານຄຸນທາດການເມືອງ:** ການປັບປຸງທັດສະນະ ແລະ ຄຸນສົມບັດສິທຳປະຕິວັດຂອງພະນັກງານປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມໜັກແໜ້ນເພື່ອຍົກສູງຄວາມສາມາດໃນການປະຕິບັດໜ້າທີ່ວຽກງານ ແລະໄດ້ຮັບຄວາມເຊື່ອຖືຈາກສັງຄົມ. ສະນັ້ນ, ພວກເຮົາຕ້ອງອອກແຮງຈັດຕັ້ງບຳລຸງທິດສະດີການເມືອງ, ໂດຍສະເພາະແມ່ນທັດສະນະຂອງ

[3] ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ປີ 2011

ພັກແຕ່ລະໄລຍະກ່ຽວກັບວຽກງານຍຸຕິທຳ ແລະ ວຽກງານປະຕິບັດຄຳຕັດສິນຂອງສານໃຫ້ພະນັກງານຂົງເຂດດັ່ງກ່າວໄດ້ຮັບຮູ້ເຊື່ອມຊຶມຢ່າງເປັນລະບົບແລະເປັນປົກກະຕິຮັບປະກັນໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານແຕ່ລະຄົນຕ້ອງມີຄວາມໜັກແໜ້ນທາງດ້ານການເມືອງ, ທັດສະນະຊົນຊັ້ນກຳມະກອນ, ມີນ້ຳໃຈສັດຊື່ບໍລິສັດຮັບໃຊ້ປະຊາຊົນຢ່າງສຸດກົກສຸດປາຍເຫັນຜົນປະໂຫຍດສ່ວນລວມສູງກວ່າຜົນປະໂຫຍດສ່ວນຕົວ, ມີຈັນຍາບັນຈັນຍາທຳຕໍ່ການປະຕິບັດໜ້າທີ່ຂອງຕົນ, ມີຄວາມບຸ້ມບອນຄ່ອງແຄ້ວ ແລະເດັດຂາດຕໍ່ໜ້າທີ່ວຽກງານ, ມີຄວາມຮູ້ໃນການປຸກລະດົມສຶກສາອົບຮົມໃຫ້ຜູ້ມີພັນທະຕ້ອງປະຕິບັດຕາມຄຳຕັດສິນຂອງສານໃຫ້ສຳເລັດເພື່ອຮັບປະກັນສິດແລະຜົນປະໂຫຍດຂອງລັດ, ລວມໝູ່ແລະພົນລະເມືອງ.

**2). ດ້ານວິຊາການ:** ເອົາໃຈໃສ່ຝຶກອົບຮົມດ້ານວິຊາການໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມໜັກແໜ້ນທາງດ້ານວິຊາການຮັບປະກັນໃຫ້ພະນັກງານແຕ່ລະຄົນມີຄວາມຮູ້ທາງດ້ານກົດໝາຍທີ່ແນ່ນອນ, ມີຄວາມສາມາດໃນການຈັດຕັ້ງປະຕິບັດກົດໝາຍໃຫ້ມີປະສິດທິຜົນ. ພະນັກງານປະຕິບັດຄຳຕັດສິນຂອງສານທີ່ໄດ້ຜ່ານການສຶກສາວິຊາກົດໝາຍຈາກສະຖາບັນການສຶກສາຕ້ອງໄດ້ຮັບການຝຶກອົບຮົມສະເພາະກ່ຽວກັບຂັ້ນຕອນ, ວິທີການແລະມາດຕະການໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມຫຼັກສູດຂອງກະຊວງຍຸຕິທຳ.

**3). ດ້ານວຽກງານບໍລິຫານ:** ປັບປຸງວຽກງານບໍລິຫານໃຫ້ເດີນແມ່ນແລ່ນສະດວກເປັນຕົ້ນ ແມ່ນການໃຫ້ຄຳປຶກສາກ່ຽວກັບເອກະສານ, ຂັ້ນຕອນດຳເນີນການ ແລະ ສາມາດຄາດະຄເນໃຫ້ກຳນົດເວລາທີ່ແນ່ນອນໃນການຮັບນິຕິກຳຈາກກົມ, ຈາກຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**4). ດ້ານງົບປະມານ:** ໃນຊຸມປີຕໍ່ໜ້າ ພະແນກຍຸຕິທຳໃນນາມອົງການຄຸ້ມຄອງ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ຈັດແບ່ງງົບປະມານໃຫ້ກອງ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານແຕ່ລະເມືອງ ເພື່ອນຳໃຊ້ເຂົ້າໃນວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ເດີນແມ່ນແລ່ນສະດວກຂຶ້ນຕື່ມເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວຊີ້ນຳ, ຊຸກຍູ້, ກວດກາ ແລະ ຈັດຕັ້ງປະຕິບັດ.

**5). ດ້ານພະຫະນະອຸປະກອນ:** ໃນຊຸມປີຕໍ່ໜ້າກະຊວງຍຸຕິທຳ, ພະແນກຍຸຕິທຳ ໃນນາມເປັນອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ຈັດຊື້ນອຸປະກອນຮັບໃຊ້ທີ່ຈຳເປັນ (ຄອມພິວເຕີ້, ລົດຈັກ ແລະ ອື່ນໆ) ຕອບສະໜອງໃຫ້ກອງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານແຕ່ລະເມືອງ ຫຼື ນຳເອົາລາຍຮັບທີ່ເກັບໄດ້ຈາກການປະຕິບັດຄຳຕັດສິນຂອງສານ ສະເໜີນຳການນຳຂອງແຂວງ ເພື່ອຊື້ພາຫະນະທີ່ຈຳເປັນ (ລົດໃຫຍ່) ທີ່ຮັບໃຊ້ໃນເວລາທີ່ພະນັກງານລົງໄປຈັດຕັ້ງປະຕິບັດກັບທີ່.

**6). ດ້ານແບບແຜນວິທີເຮັດວຽກ:** ເພີ່ມທະວີການນຳພາຂອງຄະນະພັກ, ຄະນະພະແນກກ່ຽວກັບການປັບປຸງແບບແຜນວິທີເຮັດວຽກ ແລະ ວິທີນຳພາຂອງຄະນະພັກ ໂດຍສະເພາະຕໍ່ກັບພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ເຂົ້າຊູ່ລະບອບ, ລະບຽບແບບແຜນ, ປະຕິບັດລະບອບດຳເນີນຊີວິດການເມືອງ ແລະ ການລວມສູນປະຊາທິປະໄຕຢ່າງເຂັ້ມງວດ.

**7). ດ້ານການປະສານງານ:** ປັບປຸງວິທີການປະສານສົມທົບກັນໃຫ້ສອດຄ່ອງກົມກຽວລະຫວ່າງອົງການຄຸ້ມຄອງ, ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະການປະຊາຊົນ ແລະ ພາກສ່ວນອື່ນ ຕ້ອງໄດ້ເອົາໃຈໃສ່ຈັດກອງປະຊຸມປຶກສາຫາລືແລກປ່ຽນຄຳຄິດຄຳເຫັນຢ່າງເປັນປະຈຳ ແລະ ກົມກຽວກັນ, ເດັດຂາດ, ແກ້ສະພາວະທີ່ຖີ້ມຄວາມຮັບຜິດຊອບໃສ່ກັນ ພ້ອມກັນນັ້ນໃນເວລາຈັດຕັ້ງປະຕິບັດຕົວຈິງຄວນເຊີນຕົວແທນຂອງທຸກພາກສ່ວນ ແລະ ປະຊາຊົນຢູ່ບ່ອນຈັດຕັ້ງຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນເຂົ້າຮ່ວມນຳ.

**8). ດ້ານການກວດກາປະເມີນຜົນ:** ໃນຊຸມປີຕໍ່ໜ້າຈະໄດ້ເອົາໃຈໃສ່ປະສານສົມທົບກັບອົງການໄອຍະການປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຕ່ລະເຂດ ລົງຊຸກຍູ້ຕິດຕາມກວດກາປະເມີນຜົນຢູ່ແຕ່ລະໜ່ວຍງານກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານເປັນຕົ້ນ ການຕິດຕາມກວດກາເກັບກຳສະພາບການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ, ກວດກາຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກ, ກວດກາການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບ-ລາຍຈ່າຍ, ກວດກາຄວາມຖືກຕ້ອງຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານເປັນຕົ້ນການປະຕິບັດກົດໝາຍ, ການຊຳລະທາງແພ່ງ, ການເກັບ ແລະ ການມອບຄ່າທຳນຽມສານ, ຄ່າອາກອນ ແລະ ຄ່າປັບໄໝເຂົ້າງົບປະມານ, ການຮິບຊັບເຂົ້າເປັນຂອງລັດ, ຕາມສິດ ແລະ ໜ້າທີ່ໆໄດ້ກຳນົດໄວ້ໃນກົດໝາຍ.[4]

**References:**


1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
2. ບົດລາຍງານຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ, ຊຸດທີ VIII (ຄັ້ງວັນທີ 25/10/2017), ໜ້າ 4;
3. ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ປີ 2011;
4. ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 38/ນຍ, ລົງວັນທີ 6 ພະຈິກ 2006;
5. ບົດໂຄງການຈົບຊັ້ນຂອງນັກສຶກສາກົດໝາຍປະລິນຍາຕີ, ສະຖາບັນຍຸຕິທຳແຫ່ງຊາດ: ການປັບປຸງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສົກປີ 2012-2013 ໜ້າທີ 44-48.


[4] ບົດໂຄງການຈົບຊັ້ນຂອງນັກສຶກສາກົດໝາຍປະລິນຍາຕີ, ສະຖາບັນຍຸຕິທຳແຫ່ງຊາດ: ການປັບປຸງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສົກປີ 2012-2013 ໜ້າທີ 44-48.